ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 960 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 NOV 2014

ສຳນັກງານ ຄຄຊ
ສົ່ງຮອດ ເລກທີ 1406
ວັນທີ 21 NOV 2014
ໂທລະສັບ 021 217770

## ຂໍ້ຕົກລົງ
## ວ່າດ້ວຍການແບ່ງຄວາມຮັບຜິດຊອບ
## ວຽກງານຂອງຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14/10/1999;
- ອີງຕາມຂໍ້ກຳນົດກ່ຽວກັບແບບແຜນວິທີເຮັດວຽກຂອງຄະນະຜູ້ວ່າການ ທຫລ ສະບັບເລກທີ 333/ທຫລ ລົງວັນທີ 19/12/1996;
- ອີງຕາມການຕົກລົງຂອງກອງປະຊຸມຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 13/11/2014.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1.** ແບ່ງຄວາມຮັບຜິດຊອບວຽກງານພາຍໃນຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ດັ່ງນີ້:

**I. ທ່ານ ດຣ. ສົມພາວ ໄຟສິດ** ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊີ້ນຳ-ນຳພາລວມວຽກງານຮອບດ້ານຂອງທະນາຄານແຫ່ງ ສປປ ລາວ, ລົງເລິກຊີ້ນຳວຽກງານຂອງກົມ-ທຽບເທົ່າ ຄື:

1. ກົມຈັດຕັ້ງແລະພະນັກງານ
2. ກົມນະໂຍບາຍເງິນຕາ;
3. ກົມບໍລິການທະນາຄານ;
4. ກົມເງິນຕາ;
5. ທະນາຄານນະໂຍບາຍ.

**II. ທ່ານ ຄຳວົງ ທິບພະວົງ** ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊ່ວຍຜູ້ວ່າການຊີ້ນຳ-ນຳພາລວມວຽກງານຮອບດ້ານຂອງທະນາຄານແຫ່ງ ສປປ ລາວ, ລົງເລິກຊີ້ນຳວຽກງານຂອງກົມ-ທຽບເທົ່າ ຄື:

1. ຫ້ອງການ ທຫລ;
2. ກົມກວດກາພາຍໃນ;
3. ສະຖາບັນການທະນາຄານ;
4. ໂຮງພິມທະນະບັດ ທຫລ;
5. ບັນດາສາຂາ ທຫລ ທີ່ປະຈຳຢູ່ທ້ອງຖິ່ນ.

**III.** ທ່ານ **ສອນໄຊ ສິດພະໄຊ** ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊ່ວຍຜູ້ວ່າການຊີ້ນຳ-ນຳພາລວມວຽກງານຮອບດ້ານຂອງທະນາຄານແຫ່ງ ສປປ ລາວ, ລົງເລິກຊີ້ນຳວຽກງານຂອງກົມ-ທຽບເທົ່າ ຄື:

1. ກົມຄຸ້ມຄອງສະຖາບັນການເງິນ;
2. ກົມບັນຊີ-ການເງິນ;
3. ກົມເຕັກໂນໂລຊີຂໍ້ມູນຂ່າວສານ;
4. ສູນບໍລິການເກັບຊື້ໜີ້ ແລະຮັບຝາກເກັບໜີ້;
5. ທະນາຄານພັດທະນາລາວ;
6. ທະນາຄານສົ່ງເສີມກະສິກຳ.

**IV.** ທ່ານ **ນ. ວັດທະນາ ດາລາລອຍ** ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊ່ວຍຜູ້ວ່າການຊີ້ນຳ-ນຳພາລວມວຽກງານຮອບດ້ານຂອງທະນາຄານແຫ່ງ ສປປ ລາວ, ລົງເລິກຊີ້ນຳວຽກງານຂອງກົມ-ທຽບເທົ່າ ຄື:

1. ກົມຄຸ້ມຄອງທະນາຄານທຸລະກິດ;
2. ສຳນັກງານ ຄຄຊ;
3. ກົມພົວພັນສາກົນ;
4. ໜ່ວຍງານຂໍ້ມູນຕ້ານການຟອກເງິນ;
5. ກອງທຶນປົກປ້ອງຜູ້ຝາກເງິນ;
6. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ມາດຕາ 2. ການພົວພັນວຽກງານ:**

**1.** ທຸກວຽກງານ ແລະເອກະສານຕ່າງໆ ທີ່ເປັນບັນຫາໃຫຍ່ ແລະສຳຄັນຍຸດທະສາດຂອງຫ້ອງການ, ບັນດາກົມ-ທຽບເທົ່າ, ຄະນະຮັບຜິດຊອບວຽກງານ ແລະອົງການຈັດຕັ້ງໆ ທີ່ຂຶ້ນກັບຄະນະຜູ້ວ່າການ ກ່ອນຈະນຳສະເໜີຕໍ່ຜູ້ວ່າການພິຈາລະນາ ຕ້ອງໄດ້ຜ່ານການຄົ້ນຄວ້າ ແລະມີຄວາມເຫັນຈາກຮອງຜູ້ວ່າການ ຜູ້ທີ່ລົງເລິກຊີ້ນຳຕາມການແບ່ງຄວາມຮັບຜິດຊອບຂ້າງເທິງນັ້ນ;

**2.** ວຽກງານປະຈຳວັນ ແລະບັນຫາຕ່າງໆຢູ່ໃນແຜນການທີ່ຄະນະຜູ້ວ່າການໄດ້ຕົກລົງເປັນເອກະພາບແລ້ວແມ່ນມອບໃຫ້ຮອງຜູ້ວ່າການ ຜູ້ທີ່ຮັບຜິດຊອບຊີ້ນຳບັນຫານັ້ນແກ້ໄຂໂດຍກົງ;

**3.** ວຽກງານໃດໜຶ່ງທີ່ຜູ້ວ່າການມອບໃຫ້ບັນດາກົມ-ທຽບເທົ່າ ຫຼື ບຸກຄົນກ່ຽວຂ້ອງປະຕິບັດ ໃຫ້ພາກສ່ວນ ຫຼື ບຸກຄົນດັ່ງກ່າວລາຍງານໃຫ້ຜູ້ວ່າການໂດຍກົງ; ຈາກນັ້ນ, ຈຶ່ງລາຍງານວຽກທີ່ຜູ້ວ່າການໄດ້ຕົກລົງໃຫ້ຮອງຜູ້ວ່າການຊາບ.

**ມາດຕາ 3.** ຫ້ອງການທະນາຄານແຫ່ງ ສປປ ລາວ, ກົມຈັດຕັ້ງແລະພະນັກງານ, ບັນກົມ-ທຽບເທົ່າ ແລະພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍຄະນະຜູ້ວ່າການ ຈົ່ງຮັບຮູ້ ແລະປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 29/ທຫລ, ລົງວັນທີ 13/01/2012 ແລະມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ດຣ. ສົມພາວ ໄພສິດ